ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

0038
ເລກທີ:...../ປທລ/2019

ນະຄອນຫຼວງວຽງຈັນ, ວັນທີ: 26 ເມສາ 2019

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ທ່ານ ຜູ້ຖືຮຸ້ນ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ເລກທີ 04/ຄຄຊ, ລົງວັນທີ 28/02/2019;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27/09/2018.

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ເມື່ອວັນທີ 26 ເມສາ 2019 ເວລາ 09:30 ໂມງ ທີ່ອາຄານຕະຫຼາດຫຼັກຊັບລາວ, ຫ້ອງປະຊຸມໃຫຍ່ຊັ້ນ 8, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 24 ທ່ານ, ຖືຮຸ້ນລວມ 198.511.521 ຮຸ້ນ, ຄິດເປັນ 84,47% ຂອງຈຳນວນຮຸ້ນທັງໝົດທີ່ຈຳໜ່າຍແລ້ວຂອງບໍລິສັດ ໂດຍທີ່ປະຊຸມໄດ້ມີມະຕິດັ່ງນີ້:

1. **ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນ ປະຈຳປີຜ່ານມາ ເພື່ອຊາບ**

2. **ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ I/2018**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.510.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.510.521 ສຽງ ຄິດເປັນ 100 %.

3. **ລາຍງານຕົວເລກຊັບສິນຂອງ ປທລ ທີ່ໂອນໃຫ້ 2 ບໍລິສັດລູກ ພ້ອມທັງ ພິຈາລະນາ ແລະ ຮັບຮອງ ໂຄງສ້າງ, ການ ບໍລິຫານ ແລະ ສັດສ່ວນການຖືຄອງຮຸ້ນຂອງ 2 ບໍລິສັດລູກ ຄື: (1) ບໍລິສັດ ປີໂຕຣເທຣດ ພຸ່ມ່າ ເອເນີຈີ ນ້ຳເຂົ້ຳ - ສົ່ງ ອອກ ຈຳກັດ (2) ບໍລິສັດ ປີໂຕຣເທຣດ ພຸ່ມ່າ ເອເນີຈີ ດີສທະບິວຊັນ ຈຳກັດ ເພື່ອຊຳບ**

4. **ພິຈາລະນາ ແລະ ຮັບຮອງ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງ ຜູ້ກວດສອບພາຍນອກ ປະຈຳ ປີ 2018 ແລະ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2018**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

5. **ພິຈາລະນາ ແລະ ຮັບຮອງ ບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2018 ອັນເນື່ອງມາຈາກ ບໍລິສັດ ຂາດທຶນໃນການດຳເນີນທຸລະກິດ**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

6. **ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2019**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

7. **ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2019**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

8. **ພິຈາລະນາ ຮັບຮອງຕໍ່ອາຍຸການຂອງ ສະມາຊິກສະພາບໍລິຫານ ແລະ ສະມາຊິກຄະນະກວດສອບອິດສະລະຊຸດ ປະຈຸບັນອີກໜຶ່ງສະໄໝ ແລະ ການປັບຕຳແໜ່ງພາຍໃນສະພາບໍລິຫານ**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

9. **ຮັບຮອງເອົາ ການໃຫ້ສິດແກ່ສະພາບໍລິຫານ ໃນການພິຈາລະນາການຈ່າຍເງິນປັນຜົນລະຫວ່າງປີ 2019 ຖ້າຫາກ ບໍລິສັດມີຜົນກຳໄລຈາກການດຳເນີນງານທຸລະກິດ**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.511.521 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.511.521 ສຽງ ຄິດເປັນ 100 %.

ໃນກອງປະຊຸມສາມັນຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາເພີ່ມເຕີມ, ປະທານກອງປະຊຸມ ຈຶ່ງກ່າວປິດກອງປະຊຸມ ໃນເວລາ 12:05 ໂມງ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານບັນດາທ່ານເພື່ອຮັບຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານກອງປະຊຸມ.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ໂພໄຊ ຈັນທະວົງສາ